# ບົດຮຽນໂຮງຮຽນວັນອາທິດ
## ວັນອາທິດ ທີ 22 ມິຖຸນາ 2008 (6-22-2008)

## ພະລັງຂອງຄຳເວົ້າເຮັດໃຫ້ສລາດ

**ຂໍ້ພຣະຄັມພີໃນບົດຮຽນ:** ສຸພາສິດ 17:27-28; 18:20-21; 25:11-12; 26:20-22; 28

**ພຣະຄັມພີແຫ່ງຄວາມຈິງ:** ເພາະວ່າຄຳເວົ້າມີພະລັງອຳນາດ, ພຣະເຈົ້າຈິ່ງຕ້ອງການໃຫ້ໄພ່ພົນຂອງພຣະອົງໃຊ້ຄຳເວົ້າເພື່ອສ້າງຄວາມດີ ບໍ່ແມ່ນເພື່ອສ້າງຄວາມຊົ່ວ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ຂຽນຂື້ນມາເພື່ອຊ່ວຍທ່ານສະແດງຄວາມສລາດທີ່ມາຈາກພຣະເຈົ້າໃນການໃຊ້ຊີວິດປະຈຳວັນ ດ້ວຍ:

+ ການຮັບຮູ້ວ່າ ຄຳເວົ້າຂອງຕົວເອງມີພະລັງອຳນາດທີ່ຊ່ວຍເສີມສ້າງ ຫຼື ທຳລາຍ, ແລະ
+ ການສຳຣວດການໃຊ້ຄຳເວົ້າອັນຫລວງຫລາຍເພື່ອເປັນການຊ່ວຍອຸ້ມຊູຊຸກຍູ້ ແລະ ໃຫ້ຫຼີກໃນການເວົ້າເພື່ອທຳລາຍ.

### ເປັນຫຍັງຂ້ອຍບໍ່ຄວນເວົ້າຕາມໃຈແລະປ່ອຍໃຫ້ໄປຕຳຄົນອື່ນ

ພວກທ່ານເຄີຍສັງເກດເຫັນບໍ່ວ່າ ພວກນັກຂ່າວທັງຫລາຍສັຣເສີນຍົກຍ້ອງບຸກຄົນທີ່ໃຊ້ຄວາມເວົ້າໄປໃນທາງທີ່ຜິດໆ ໂດຍອ້າງວ່າເຂົາເປີດໃຈເວົ້າຕາມຄວາມຄິດຂອງເຂົາ? ໂດຍສເພາະຈາກພວກທີ່ເວົ້າ ຕລົກຫລົ້ນເຮຣາ. ຣິດນິຍົມສຳລັບບາງຄົນ ແມ່ນຍົກຍ້ອງພວກຄົນທີ່ ບໍ່ຮູ້ຈັກລະວັງໃນການເວົ້າຈາ. ບາງຄົນກໍອ້າງວ່າພວກເຮົານັບຖືສິດເສຣີພາບໃນການປາກເວົ້າໃນສັງຄົມເຮົາ ແຕ່ໜ້າເສັຍດາຍທີ່ຄົນຖືເອົາສິດເສຣີພາບມາເວົ້າຫຼິ້ນເໝືອນເປັນເຄື່ອງຫຼິ້ນ ແທນທີ່ຈະຖືວ່າເປັນສິ່ງທີ່ຄວນໃຊ້ໃຫ້ເປັນປໂຍດ.

ໃນຂນະທີ່ປະເພນີຂອງສັງຄົມເຮົາບໍ່ໄດ້ຮັບຮູ້ພະລັງອຳນາດຂອງຄວາມເວົ້າທີ່ໃຫ້ປໂຍດຫຼືໃຫ້ໂທດ, ພຣະຄັມພີໄດ້ບອກໄວ້ວ່າ ພຣະເຈົ້າໄດ້ເລືອກສັນເອີ້ນເອົາພວກເຮົາໃຫ້ໃຊ້ຄຳເວົ້າຂອງເຮົາເພື່ອເສີມສ້າງ. ການຮຽນພຣະຄັມພີບົດນີ້ຊອກຊີ້ບອກໃຫ້ທ່ານອອກສະແດງສະຕິປັນຍາໃນທາງຂອງພຣະເຈົ້າໃນການໃຊ້ຊີ ວິດປະຈຳວັນໂດຍຮັບຮູ້ພະລັງຂອງຄຳເວົ້າຈາ ແລະ ສຳຣວດຜົນສະທ້ອນຈາກຄຳເວົ້າຂອງທ່ານ.

### ສຶກສາພຣະຄັມພີ

**1. ໃຫ້ເລືອກຄຳເວົ້າຢ່າງລະມັດລະວັງ** (ສຸພາສິດ 17:27-28)

ເວລາໃດທີ່ທ່ານເຄີຍໄດ້ຍິນຜູ້ໃດຜູ້ນຶ່ງບໍ່ທີ່ເວົ້າວ່າ, "ຂ້ອຍເວົ້າຕາມໃຈຂ້ອຍ ຕາມຄວາມຄິດຂອງຂ້ອຍ, ແລະໄດ້ປ່ອຍໃຫ້ມັນໄປຕຳບ່ອນທີ່ມັນຄວນໄປ?" ຕາມພຣະຄັມພີແລ້ວ, ການເວົ້າເກີນເປັນ ຄວາມເວົ້າທີ່ ບໍ່ມີຄວາມສລາດ. ບາງຄົນກໍເປັ່ງຄຳເວົ້າອອກໄປຕາມໃຈຊອບຂອງຕົນເອງ, ນອກຈາກວ່າເປັນການໂງ່ແລ້ວ ຍັງເປັນການຜິດອີກ. (ສພສ 15:28; 21:23). ຜູ້ທີ່ສລາດແລະຮັກພຣະເຈົ້າຕ້ອງລະວັງຄວາມເວົ້າ ຂອງຕົນເອງ.

ຍັງມີສິ່ງນຶ່ງທີ່ຮ້າຍແຮງກວ່າຄວາມທຳຜິດ; ແມ່ນທຳຜິດທີ່ສຽງຂອງຕົນເອງ. ເວົ້າຜິດກ່ອນຄິດຖີ່ຖ້ວນກັບເຣື່ອງທີ່ຈະເວົ້ານັ້ນ ນອກຈາກເປັນການໜ້າອັບອາຍຍັງຈະນຳຄົນນັ້ນພົບກັບບັນຫາອັນອີກ. ຂໍໃຫ້ທ່ານຄິດຕຶກຕອງໃຫ້ແນ່ນອນກັບສະຖານນະການນັ້ນເສັຽກ່ອນ ກ່ອນຈະໃຫ້ຄຳແນະນຳ ແລະຈິ່ງຢັບຢັ້ງຈາກການອອກຄວາມຄິດເຫັນຂອງຕົນເອງຈົນກວ່າຮູ້ຈັກຂໍ້ມູນທີ່ຈຳເປັນທັງໝົດເສັຽກ່ອນ. ມີຄຳເຕືອນ ທົ່ວໄປເວົ້າໄວ້ວ່າ, "ປິດປາກໃຫ້ແໜ້ນສນິດ

ແລະປ່ອຍໃຫ້ຄົນອື່ນເຂົ້າສົງສັຍຢາກຮູ້ວ່າຄົນເອງເປັນໂງ່ຫຼືບໍ່ ແທນທີ່ຈະປ່ອຍອອກໄປຈົນໝົດເຮັດໃຫ້ຄົນໝົດຂໍ້ສົນໃຈກ່ຽວກັບຄຳຖາມທີ່ມີ." ເຖິງແມ່ນຄົນໂງ່ກໍຍັງຈະຖືກ ຫາວ່າເປັນຄົນສລາດໃນເມື່ອລາວມິດງຽບຢູ່.

ການຮັກສາຈິດໃຈໃຫ້ເຢັນຈະຊ່ວຍຄົນນັ້ນຫລີກຈາກບັນຫາກັບຕົນເອງຍ້ອນຄຳເວົ້າທີ່ບໍ່ລະວັງ. ເຖິງແມ່ນເວົ້ານ້ອຍດຽວໃນເວລາໃຈຮ້າຍ ກໍສາມາດທຳຄວາມເສັຽຫາຍຕລອດຊີວິດໄດ້. ຮຽນຮັກສາບັງຄັບປາກແລະຄວາມໃຈຮ້າຍຂອງຕົນເອງຈະສາມາດປ້ອງກັນຄວາມເສັຽຫາຍໄດ້ຢ່າງຫລວງຫລາຍ. ບັນຫາຂອງການບໍ່ຮັກສາຄຳເວົ້າສາມາດທຳລາຍຄວາມສຳພັນ, ທຳລາຍວຽກງານແລະເງິນລາຍໄດ້, ທຳຮ້າຍທາງຮ່າງກາຍສຸຂພາບ, ແລະທຳລາຍໃນການເປັນພະຍານ.

ເວລາໃດທີ່ເຮົາເວົ້າຢ່າງມີຫລັກຖານທີ່ເຕັມໄປດ້ວຍການຕຶກຕອງແລະຄວາມເຂົ້າໃຈ ກໍສະແດງໃຫ້ເຫັນວ່າເປັນຄົນມີປັນຍາ. ພວກເຮົາເປັນຄົນມີປັນຍາຖ້າຮູ້ຈັກງຽບສງົບຫລາຍກວ່າທີ່ເວົ້າອອກຄວາມເຫັນໃນເວລາທີ່ເຮົາຍັງບໍ່ເຂົ້າໃຈໃນສະຖານນະການຢ່າງແທ້ຈິງ. ເຮົາບໍ່ຄວນສະແດງວ່າເຮົາຮູ້ຄວາມຈິງໃນເມື່ອເຮົາຍັງບໍ່ຮູ້.

## ໒. ໃຫ້ນັບຖືພະລັງອຳນາດຂອງຄຳເວົ້າ (ສຸພາສິດ 18:20-21)

"ເຮົາຕ້ອງເວົ້າແນວໃດແນວນຶ່ງ" ນີ້ເປັນສິ່ງທີ່ຄົນຊາວອະເມຣິກັນຖືວ່າສຳຄັນ. ພຣະຄັມພີເຕືອນໄວ້ວ່າຫລັງຈາກເຮົາໄດ້ເວົ້າແລ້ວ, ສິ່ງທີ່ເຮົາເວົ້ານັ້ນກໍຫຸ້ມຮັດເຮົາເອງ. ຄຳເວົ້າຂອງເຮົາບໍ່ຄ່ອຍຈະເປັນເໝືອນລູກປືນ ແຕ່ມັນເໝືອນກັນກັບໝາກ "ບູມເມີແຮງ (boomerangs)" ເມື່ອເຮົາໂຍນໄປມັນກໍບິນໂຄ້ງໄປລະຍະນຶ່ງ ແລ້ວກໍກັບຄືນມາຫາເຮົາເອງ. ມັນເປັນສ່ວນນຶ່ງໃນຕົວເຮົາ, ເປັນບຸກຄລິກລັກສນະ, ແລະເປັນພະຍານໃນຕົວເຮົາຕໍ່ຄົນອື່ນໆອີກ.

ຜົນສທ້ອນໃນຕົວ ຈາກຄຳເວົ້າຂອງເຮົາສາມາດນຳໄປໃນທາງດີ. ເວົ້າຄຳທີ່ຖືກຕ້ອງໃນເວລາທີ່ເໝາະສົມຈະຊ່ວຍໃຫ້ເຮົາພູມໃຈທີ່ຮູ້ວ່ານ້ຳພຣະທັຍຂອງພຣະເຈົ້າໄດ້ສຳເຣັດ (ສພສ 15:23). ການທີ່ເຮົາເຕັມປ່ຽມໄປດ້ວຍຄຳເວົ້າອັນຖືກຕ້ອງນັ້ນມັນຈະຊ່ວຍໃຫ້ເຮົາມີກຳລັງເຂັ້ມແຂງ ເໝືອນກັນກັບເຮົາ ໄດ້ກິນອາຫານຢ່າງດີມີຄຸນນະພາບ. ແຕ່ກົງກັນຂ້າມກັບຄວາມເປັນຈິງ, ຖ້າຄຳເວົ້າຂອງເຮົາເຕັມໄປດ້ວຍການ ທຳລາຍແລະກຽດຊັງ, ພວກເຮົາກໍສາມາດລໍຖ້າຮັບຜົນສະທ້ອນທີ່ທໍຣະມານແລະເສັຽຫາຍຕາມມາ.

ລີ້ນບັນຈຸພະລັງອຳນາດຂອງຄວາມຕາຍແລະຊີວິດ, ບາງຄຳກໍມີຜົນໃນການປຽວຢາປິ່ນປົວ ແລະ ບາງຄຳກໍທຳລາຍນ້ຳງເຜ (ສພສ 15:4). ການທີ່ຮູ້ຄວາມຈິງອັນນີ້ໝາຍຄວາມວ່າພວກເຮົາເຫັນຄຸນຄ່າ ຫຼື ຮັກຫອມຄວາມສາມາດຂອງເຮົາເພື່ອການສື່ສານພົວພັນ. ພວກເຮົາບໍ່ຄວນປ່ອຍໃຫ້ຈຸດໝາຍອັນ ຍິ່ງໃຫ່ຽໃນໝາກຜົນຂອງການໃຊ້ພາສານັ້ນເຮັດໃຫ້ເຮົານ້ອຍເນື້ອຕ່ຳໃຈ ດ້ວຍການສະແດງອາການທີ່ມິດງຽບຢູ່ ແຕ່ຈົ່ງໃຫ້ມັນອຸ່ນຊູກະຕຸ້ນຈິດໃຈເຮົາຖວາຍຕົນເອງໃນການໃຊ້ຄວາມເວົ້າ--ສິ່ງທີ່ເຮົາຈະເວົ້າ, ວິທີທີ່ເຮົາຈະເວົ້າ, ເວລາທີ່ເຮົາຈະເວົ້າ--ເພື່ອພຣະເຈົ້າແລະຈົ່ງປ່ອຍໃຫ້ພຣະອົງໃຊ້ຄວາມເວົ້າຂອງເຮົາ ສຳລັບພຣະປະສົງຂອງພຣະອົງ.

ການທີ່ຮູ້ຈັກວ່າຄວາມເວົ້າຂອງພວກເຮົາໄດ້ສ້າງຜົນດີແກ່ຊີວິດໃຫ້ບາງຄົນກໍເປັນໝາກຜົນອັນຫວານຫອມທີ່ແທ້ຈິງ. ມັນເປັນໂອກາດອັນເລີດລ້ຳແທ້ທີ່ເຮົາສາມາດນຳພຣະຄຳຂອງພຣະເຈົ້າໃຫ້ແກ່ ຄົນທີ່ຍັງຫລົງຫາຍໄດ້ກັບມາຮັບເອົາຄວາມເຊື່ອໃນພຣະເຈົ້າ. ແຕ່ເປັນໜ້າຢ້ານຫລາຍທີ່ຮູ້ວ່າຄຳເວົ້າ ທີ່ບໍ່ໄດ້ຕຶກຕອງໄປບັງຄົນອື່ນໄວ້ບໍ່ໃຫ້ເຂົາມີໂອກາດທີ່ຈະຮັບເອົາຄວາມເຊື່ອແລະຮັບເອົາຊີວິດຄຣິສຕຽນ. ໃນການສລາດໃຊ້ຄຳເວົ້າທີ່ມີພະລັງອຳນາດ ພຣະເຈົ້າຫວັງໃຫ້ພວກເຮົາໃຊ້ຄຳເວົ້າທີ່ສ້າງໝາກຜົນທີດີ ບໍ່ແມ່ນ ໝາກຜົນທີ່ເປື່ອຍເນົ່າ.

ພວກເຮົາສະແດງໃຫ້ເຫັນວ່າເຮົາມີປັນຍາໃນສິ່ງທີເຮົາເວົ້າ, ເວລາທີ່ເຮົາເວົ້າ, ແລະວິທີທີ່ເຮົາເວົ້າ ທີ່ສາມາດຜລິດຜົນດີຍິ່ງ--ແຕ່ກໍສາມາດທົນຕໍ່ການທຳລາຍອີກດ້ວຍ. ພວກເຮົາຮູ້ສຶກຮູ້ບຸນຄຸນຕໍ່ພຣະເຈົ້າ ທີ່ເປັນຜູ້ສ້າງຄວາມເວົ້າ, ຊ່ວຍໃຫ້ເຮົາມີຄວາມສາມາດຕິດຕໍ່ສັມພັນຍ້ອນພະລັງອຳນາດຂອງພາສາ.

## ໓. ໃຊ້ຄຳເວົ້າທີ່ດີ (ສຸພາສິດ 25:11-12)

ຄວາມຄ່ອງແຄ້ວຕ້ອງໃຊ້ສິລປະໃນການເວົ້າທີ່ມີປັນຍາ. ຄຳເຕືອນທີ່ສລາດເປັນເໝືອນໝາກແອັບໂປຄຳຢູ່ຖາດເງິນ. ແຕ່ບໍ່ໄດ້ໝາຍເຖິງວ່າໝາກແອັບໂປທີ່ເຮັດດ້ວຍຄຳ ແຕ່ໝາຍເຖິງຄຸນຄ່າຂອງມັນປຽບກັບໂລຫະທີ່ມີຣາຄາແພງ. ພວກເຮົາບໍ່ຄວນຄິດວ່າສິລປະໃນການໃຊ້ຄຳເວົ້າທີ່ຖືກຕ້ອງຕາມເວລານັ້ນຈະ ໄດ້ມາງ່າຍໆ. ຄຳເວົ້າທີ່ສລາດນັ້ນໄດ້ມາດ້ວຍການຄຶດໄຕ່ຕອງລ່ວງໜ້າ ແລະ ການຝຶກຊ້ອມອັນຈິງຈັງ. ຄຳເວົ້າທີ່ເໝາະສົມກັບເວລາໄດ້ມາຈາກຄວາມພຽນ, ບໍ່ແມ່ນຂອງທີ່ໄດ້ມາຕາມທຳມະຊາດເພື່ອໃຫ້ຄົບເຕັມ

ເຖິງຢ່າງໃດກໍຕາມ, ຄວາມຄ່ອງແຄ້ວນັ້ນບໍ່ຄວນທຳໃຫ້ຫລຸດລົງເປັນຄວາມຫລອກລວງ. ໃນລະຍະເວລາທີ່ຊອກຫາວິທີຖືກຕ້ອງທີ່ຈະເວົ້າສິ່ງໃດສິ່ງນຶ່ງ, ຜູ້ທີ່ເວົ້ານັ້ນບໍ່ຄວນຫລົງໄປຈາກຄວາມຈິງ (ສຸພາສິດ 14:25). ວຽກງານຂັ້ນທຳອິດແມ່ນການເວົ້າຄວາມຈິງ ແລະໃຫ້ເວົ້າຄວາມຈິງຢ່າງຄຶດຕຶກຕອງ ແລະຄວາມອ່ອນຫວານ (ສພສ 15:1). ຄວາມອ່ອນຫວານມີຄວາມສາມາດລະງັບຄວາມໃຈຮ້າຍຂອງການຕົວະໃຫ້ເຂົ້າຫາຄວາມຈິງແຕ່ກໍເປັນຄວາມເວົ້າທີ່ຕ້ອງອົດທົນ. ສຸພາສິດ 16:24 ກ່າວວ່າ "ຄວາມເວົ້າທີ່ຊື່ນ ໃຈເປັນເໝືອນຮັງນ້ຳເຜີ້ງ." ເໝືອນນ້ຳເຜີ້ງ, ຄຳທີ່ເວົ້າແບບອ່ອນຫວານໄຫລລົງງ່າຍແລະ ຍັງຊ່ວຍເສີມສ້າງສຸຂພາບຝ່າຍວິນຍານແລະຈິດໃຈຂອງຜູ້ຟັງ.

ເຖິງຢ່າງໃດກໍຕາມ, ພວກເຮົາບໍ່ຄວນຄິດວ່າການຕິດຕໍ່ສື່ສານນັ້ນບໍ່ໄດ້ຂຶ້ນຢູ່ກັບຜູ້ທີ່ເວົ້າຢ່າງດຽວ ຜູ້ທີ່ຮັບຟັງກໍມີຄວາມຮັບຜິດຊອບເໝືອນກັນ. ຜູ້ນັ້ນຕ້ອງມີຫູທີ່ຄອຍຮັບຟັງຈົນເກີດຄວາມສລາດໃນການດັດແປງ. ໃຫ້ສັງເກດເບິ່ງຄວາມເວົ້າຊ້ຳຂອງ "ຄຳ" ໃນຂໍ້ 12, ຄຳ ເປັນສິ່ງທີ່ມີຄ່າຫລາຍ ແຕ່ສຳລັບຄວາມປຽບທຽບແລ້ວມັນຊີ້ໄປຫາຄຸນຄ່າຂອງຄວາມເວົ້າທີ່ມີປັນຍາທີ່ນຳພາໄປເຖິງຈິດໃຈທີ່ເປີດກ້ວາງ.

## 4. <u>ໃຫ້ຫລີກຈາກການເວົ້າທີ່ເສັຽຫາຍ</u> (ສຸພາສິດ 26:20-22, 28)

ຄວາມອັນຕະລາຍຂອງຄວາມເວົ້າບໍ່ໄດ້ຂຶ້ນກັບການຂນາດຂອງສຽງ, ສຽງດັງກວ່າບໍໄດ້ໝາຍຄວາມວ່າຈະທຳລາຍໄດ້ດີກວ່າ. ທີ່ຈິງແລ້ວ, ຄຳເວົ້າຄ່ອຍໆທີ່ອອກຈາກປາກຂອງບາງຄົນ ແລະຢູ່ໃກ້ຫູຂອງຊຸມນຸມຊົນກໍເປັນຄຳເວົ້າທຳລາຍທີ່ເກີດຄວາມເສັຽຫລາຍໄດ້. ພຣະຄັມພີໄດ້ຊີ້ບອກວ່າຄຳເວົ້າຂວັນນິນທາເປັນນ້ຳມັນຊ່ວຍເພີ່ມເຕີມຄວາມຜິດຖຽງກັນ. ຫລີກໄກຈາກການເວົ້າຂວັນກໍຈະຊ່ວຍໃຫ້ການຜິດຖຽງກັນງຽບສງົບລົງ ເພາະວ່າມັນເໝືອນກັນກັບຟືນຊ່ວຍເພີ່ມໃຫ້ໄຟໄໝ້.

ເຖິງຢ່າງໃດກໍຕາມ ບໍ່ແມ່ນຄຳເວົ້າທີ່ພາໃຫ້ເກີດບັນຫາ ແຕ່ແມ່ນຜູ້ເວົ້າເປັນຜູ້ສ້າງບັນຫາ. ຄວາມຈິງນັ້ນບໍ່ແມ່ນນ້ຳມັນທີ່ເຕີມໃຫ້ໄຟໄໝ້ ແຕ່ແມ່ນຜູ້ທີ່ມັກຊອກຫາເຣື່ອງເປັນຕົ້ນເຫດ. ອຸປນິສັບແລະຄວາມຢາກທຳລາຍຊື່ສຽງຂອງຄົນອື່ນເປັນພຍາດທີ່ມີອາການອັນເລິກລັບຫລາຍກວ່າການບໍ່ຮັກສາຮີມປາກຫຼືເວົ້າຜິດ. ເຖິງວ່າຈະເວົ້າຫຼືໄດ້ຍິນ, ການເວົ້ານິນທາກໍເປັນສິ່ງທີ່ຜິດຕໍ່ສູ້ກັບບຸກຄົນທີ່ເຕັມໄປດ້ວຍພຣະວິນຍານ. ລີ້ນຂີ້ຕົວະສະແດງໃຫ້ເຫັນເຖິງຄວາມກຽດຊັງ ເປັນຈຸດປະສົງຂອງການຫລອກລວງ.

ຄວາມເສັຽຫາຍທີ່ຈະເກີດຂຶ້ນໄດ້ຈາກການເວົ້າຂວັນນັ້ນ ລີ້ຊ່ອນຢູ່ກັບຄວາມພໍໃຈຍິນດີຂອງຜູ້ເຮັດເໝືອນກັນກັບການເລືອກກິນອາຫານ ຫລຽວເບິ່ງແລ້ວມັນງາມເປັນຕາແຊບປະກອບດ້ວຍຢາເບື່ອ. ໃນເມື່ອມັນເຂົ້າໄປໃນຈິດໃຈແລ້ວ ເປັນການຍາກທີ່ຈະກັ່ນອອກ ມັນກາຍເປັນພາກສ່ວນເລິກໃນຜູ້ນັ້ນ. ຄວາມໃສ່ຮ້າຍປ້າຍສີກັບກາຍເປັນການສລຸບເອົາເອງທີ່ຜິດ ໄດ້ປ້ອນເພີ່ມໃສ່ໃຫ້ເປັນຄວາມຜິດຖຽງກັນນັ້ນໃຫ່ຽຂຶ້ນ ແລະນຳມາເຖິງຄວາມແຕກແຍກ.

ອີກຝ່າຍນຶ່ງ, ພຣະເຈົ້າໄດ້ສາບແຊ່ງປາກທີ່ຫລອກລວງ, ເວົ້າຍ້ອງຍໍແຕ່ໜ້າສາມາດຫລອກພຣະອົງໄດ້ມັນເປັນຕົ້ນເຫດຂອງຄວາມທຳລາຍ ແລະຕ້ອງຢືນຢູ່ຕໍ່ໜ້າການປ້ອຍດ່າຂອງພຣະອົງ. ຄວາມຍ້ອງຍໍຢ່າງຈິງໃຈກໍແຕກຕ່າງຈາກການຍ້ອງຍໍຕໍ່ໜ້າເພື່ອຜົນປໂຍດຂອງຕົວເອງ. ພຣະເຈົ້າຮູ້ຈັກຄວາມແຕກຕ່າງ ແລະພວກເຮົາບໍ່ຄວນຕົກເປັນ ເຫຍື່ອຂອງມັນ. ຄວາມໝູນໃຈທີ່ຈິງຈັງເປັນວິທີທາງຊ່ວຍພັທນາຄວາມສັມພັນ; ຄວາມເວົ້າຍ້ອງຍໍຕໍ່ໜ້າເປັນວິທີທຳລາຍຄວາມສັມພັນ. ພວກເຮົາຄວນເລືອກໃຊ້ຄຳເວົ້າດ້ວຍສະຕິປັນຍາໃນຊີວິດປະຈຳວັນຂອງເຮົາ.

# ບົດຮຽນແຫ່ງຊີວິດ

ຄໍາເວົ້າເປັນສິ່ງທີ່ມີພະລັງຢ່າງອັສຈັນ, ດັ່ງນັ້ນຈື່ງເຫັນວ່າມັນມີຄວາມສໍາຄັນ. ພຣະເຈົ້າຜູ້ຊົງສ້າງໄດ້ຊົງປະທານໃຫ້ພວກເຮົາມີຄວາມສາມາດໃນການປາກເວົ້າ ຈື່ງຂໍຮຽກຮ້ອງໃຫ້ພວກເຮົາໃຊ້ຄວາມເວົ້າໃຫ້ເປັນພະລັງສໍາລັບການດີ, ບໍ່ແມ່ນການຊົ່ວຮ້າຍ. ຈາກການປາກເວົ້າຂອງເຮົາ, ເຮົາສາມາດເສີມສ້າງຄວາມເປັນອັນນຶ່ງອັນດຽວກັນພ້ອມທັງສາມາດນໍາຄົນຜູ້ໃດຜູ້ນຶ່ງໃຫ້ມີຄວາມສັມພັນອັນຕລອດໄປກັບອົງພຣະຄຣິດໄດ້.

ຈາກພະລັງຂອງຄໍາເວົ້າ, ຈົ່ງຊັ່ງຊາເບິ່ງຄຸນນະພາບຂອງການສື່ສານ(ການປາກເວົ້າ) ຂອງທ່ານ...

- ຂ້າພະເຈົ້າໄດ້ວາງແຜນໄວ້(ຄິດກ່ອນ)ຢ່າງແທ້ຈິງຫລືບໍ່ວ່າຂ້າພະເຈົ້າຈະເວົ້າຫຍັງ?
- ຂ້າພະເຈົ້າອົດກັ້ນຄໍາເວົ້າໄວ້ເລື້ອຍປານໃດ ໃນເວລາທີ່ຂ້າພະເຈົ້າຢາກຈະເປັ່ງຄໍາເວົ້າອັນບໍ່ເປັນມິດອອກ?
- ວ່າງບໍ່ດົນມານີ້ ມີສິ່ງດີອັນໃດແດ່ທີ່ຂ້າພະເຈົ້າສາມາດສໍາຣວດເບິ່ງຄືນໄດ້ໃນຄໍາເວົ້າຂອງຂ້າພະເຈົ້າ?
- ວ່າງບໍ່ດົນມານີ້ ມີສິ່ງທີ່ບໍ່ດີອັນໃດແດ່ທີ່ຂ້າພະເຈົ້າສາມາດສໍາຣວດເບິ່ງຄືນໄດ້ໃນຄໍາເວົ້າຂອງຂ້າພະເຈົ້າ?
- ໃນສອງປີທີ່ຜ່ານມານີ້ ຂ້າພະເຈົ້າໄດ້ປັບປຸງແກ້ໄຂການເວົ້າໃຫ້ເຫມາະສົມໄດ້ຫລາຍພຽງໃດ?
- ຂ້າພະເຈົ້າໄດ້ເສັຽຄໍາເວົ້າໄປຫລາຍຊໍ່າໃດຕໍ່ຄົນທີ່ບໍ່ຢາກໄດ້ຍິນໃນສິ່ງທີ່ຂ້າພະເຈົ້າເວົ້າ?

ການຕອບຄໍາຖາມຂ້າງເທິງນີ້ຢ່າງສັດຊື່ແລະໄດ້ຮັບເອົາຜົນສະທ້ອນຈາກຄໍາຕອບເຫລົ່ານັ້ນ ສະແດງໃຫ້ເຫັນວ່າທ່ານໄດ້ໃຊ້ຄໍາເວົ້າອັນມີພະລັງຢ່າງແທ້ຈິງ.

ຄໍາບູຮານໄດ້ກ່າວວ່າ "**ປາຍປາກກາກໍຄົມກວ່າຄົມດາບ.**" ຄໍາເວົ້າສາມາດບັງຄັບໃຫ້ທະຫານອອກໄປສົງຄາມແລະທັນປ່ຽນປະວັດສາດໄດ້. ຈົ່ງພິຈາຣະນາເບິ່ງວ່າໄດ້ມີການເສັຽຊີວິດໄປຫລາຍຊໍ່າໃດຍ້ອນຜົນສະທ້ອນຈາກປື້ມ ຂອງຮິດເລີ *"Meien Kampf."* ບໍ່ຫນ້າຈະເປັນໄປໄດ້ທີ່ຄົນຈໍານວນຫລວງຫລາຍຕ້ອງທົນທຸກທໍຣະມານຍ້ອນຄົນໆດຽວທີ່ໃຊ້ຄໍາເວົ້າອັນມີພະລັງທີ່ຜິດ. ພຣະເຈົ້າຢາກໃຫ້ພວກເຮົາໃຊ້ຄໍາເວົ້າໃນທາງທີ່ແຕກຕ່າງນີ້ ແລະໃຊ້ຄວາມສາມາດໃນການສື່ສານພົວພັນເພື່ອພຣະສະງ່າຣາສີຂອງພຣະອົງແລະເກີດປໂຍດແກ່ຄົນທັງຫລາຍ.

ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org ຮຽງຮຽງໂດຍ BS

.